**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈຳປາສັກ ເລກທີ 03 /ຈຂ.ຈສ

ແຂວງຈຳປາສັກ, ວັນທີ 23 ກໍລະກົດ 2018

# ຄຳແນະນຳ

**ເຖິງ** : ພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນປາກເຊ ແລະ ຫ້ອງການຂັ້ນເມືອງ 9 ຕົວເມືອງ.

**ເລື່ອງ**: ສືບຕໍ່ຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນ ໄຫວຂອງກົງຈັກການຈັດຕັ້ງ.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 03/ນຍ, ລົງວັນທີ 9 ກຸມພາ 2018 ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນໄຫວຂອງກົງຈັກການຈັດຕັ້ງ ແລະ ການບັນຈຸລັດຖະກອນໃໝ່;
- ອີງຕາມ ແຈ້ງການຂອງກະຊວງພາຍໃນ ສະບັບເລກທີ 56/ພນ, ລົງວັນທີ 4 ກໍລະກົດ 2018 ສືບຕໍ່ຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນ ໄຫວຂອງກົງຈັກການຈັດ ຕັ້ງ ແລະ ການບັນຈຸລັດຖະກອນໃໝ່;
- ອີງຕາມ ໜັງສືສະເໜີຂອງ ພະແນກພາຍໃນ ສະບັບເລກທີ 211/ພພນ, ລົງວັນທີ 16 ກໍລະກົດ 2018.

ໃນໄລຍະຜ່ານມາ ແຂວງຈຳປາສັກ ພວກເຮົາແມ່ນໄດ້ເອົາໃຈໃສ່ຜັນຂະຫຍາຍຈັດຕັ້ງປະຕິບັດມະຕິຄົບຄະນະຄັ້ງທີ 5 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ X ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ ຕິດພັນກັບການປັບປຸງຕຳແໜ່ງງານໃຫ້ຈະແຈ້ງ, ເປັນລະບົບຮັດກຸມ, ດຳເນີນການດັດສົມພະນັກງານຄືນໃໝ່ໃຫ້ເໝາະສົມກັບສະພາບຕົວຈິງ ແລະ ແກ້ໄຂສະພາບຄົນເຫຼືອບໍ່ພໍ, ຮັບປະກັນໃຫ້ກົງຈັກການຈັດຕັ້ງສົມເຫດສົມຜົນ ບໍ່ໃຫຍ່ໂຕ ແລະ ເຄື່ອນໄຫວມີປະສິດທິພາບ ທັງກະຕຸ້ນຄວາມຮັບຜິດຊອບບົນຕົວພັດທະນາຕົນເອງຂອງພະນັກງານ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 03/ນຍ ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນໄຫວຂອງກົງຈັກການຈັດຕັ້ງ ແລະ ການບັນຈຸລັດຖະກອນໃໝ່ນັ້ນ ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນປາກເຊ ແລະ ຫ້ອງການ 9 ຕົວເມືອງ ກໍ່ໄດ້ຮັບຟັງການເຜີຍແຜ່ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດໄດ້ດີພໍສົມຄວນ ແຕ່ຄຽງຄູ່ກັນນັ້ນ ກໍ່ຍັງມີບາງ ພະແນກການ, ກົມກອງອ້ອມຂ້າງແຂວງ ແລະ ຫ້ອງການຂັ້ນເມືອງ ຍັງບໍ່ທັນໄດ້ມີການວາງແຜນ ແລະ ຈັດຕັ້ງປະຕິບັດຢ່າງຈິງຈັງ, ສະນັ້ນ ເພື່ອເສີມຂະຫຍາຍດ້ານດີ, ແກ້ໄຂດ້ານອ່ອນໃນໄລຍະຜ່ານມາ ເພື່ອຍົກສູງຄຸນນະພາບ ໃນການເຄື່ອນໄຫວວຽກງານຂອງກົງຈັກການຈັດຕັ້ງໃນຕໍ່ໜ້າ ຈຶ່ງມີຄຳແນະນຳບາງດ້ານດັ່ງນີ້:

1. ໃຫ້ບັນດາ ພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນປາກເຊ ແລະ 9 ເມືອງ ສ້າງແຜນຈັດຕັ້ງປະຕິບັດຄຳສັ່ງເລກທີ 03/ນຍ ຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນໄຫວຂອງກົງຈັກການຈັດຕັ້ງ ຂອງຕົນ (ເປັນຕົ້ນແມ່ນການປັບປຸງກົງຈັກໜ່ວຍງານທີ່ຂຶ້ນກັບຂະແໜງຂອງພະແນກຂັ້ນແຂວງ, ຈຸງານທີ່ຂຶ້ນກັບໜ່ວຍງານຂອງຫ້ອງການຂັ້ນເມືອງ) ແລ້ວສົ່ງແຜນການດັ່ງກ່າວໄປຍັງ ພະແນກພາຍໃນແຂວງ ເພື່ອຕິດຕາມ ເຊິ່ງກຳນົດສົ່ງບໍ່ໃຫ້ກາຍ ວັນທີ 15 ສິງຫາ 2018.

2. ໃນທ້າຍປີ 2018 ນີ້ ໃຫ້ທຸກພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນປາກເຊ ແລະ 9 ເມືອງ

ລາຍງານຜົນການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ມາຍັງພະແນກພາຍໃນ ເພື່ອຈະລາຍງານໃຫ້ ການນຳແຂວງ ແລະ ກະ ຊວງພາຍໃນຊາບ.

3. ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ນະຄອນປາກເຊ ແລະ 9 ເມືອງ ທົບທວນ ແລະ ກຳນົດຕຳແໜ່ງານ ຂອງຕົນໃຫ້ສຳເລັດ ແລ້ວສະເໜີໄປຍັງ ພະແນກພາຍໃນ ແລະ ກະຊວງສາຍຕັ້ງຂອງຕົນ ກ່ອນເດືອນຕຸລາ 2018 ເພື່ອກວດຜ່ານ ແລະ ຢັ້ງຢືນດ້ານວິຊາການ ແລ້ວສະເໜີໄປຍັງກະຊວງພາຍໃນ ເພື່ອພິຈາລະນາຕາມລະບຽບການ.

4. ໃນກໍລະນີ ການກຳນົດຕຳແໜ່ງງານຂອງພະແນກຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ ກຳນົດຍັງບໍ່ທັນຊັດເຈນ ຫຼື ກຳນົດແລ້ວເຫັນວ່າຈຳນວນຄົນ ແລະ ໜ້າວຽກບໍ່ສົມດູ່ກັນ ໃຫ້ສົມທົບກັບກົມຈັດຕັ້ງ ແລະ ພະນັກງານຂອງກະຊວງຕົນ ແລະ ພະແນກພາຍໃນ ເພື່ອໃຫ້ຄຳແນະນຳດັດປັບທີ່ແທດເໝາະກັບວຽກງານຕົວຈິງ.

5. ພາຍຫຼັງ ກະຊວງພາຍໃນ ກວດຜ່ານ ແລະ ອອກຂໍ້ຕົກລົງຮັບຮອງຈຳນວນຕຳແໜ່ງງານ ແລະ ຈຳນວນຄົນແລ້ວ ພະແນກການ, ກົມກອງຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ ຈຶ່ງລົງລາຍເຊັນໃສ່ແບບຟອມ ຫຼື ໃບກຳນົດຕຳແໜ່ງງານນັ້ນ ຕາມຂອບເຂດຄວາມຮັບຜິດຊອບຂອງໃຜລາວ ແລະ ນຳໃຊ້ເຂົ້າໃນການພິຈາລະນາບັນຈຸສັບຊ້ອນພະ ນັກງານ-ລັດຖະກອນ ເຂົ້າໃສ່ແຕ່ລະຕຳແໜ່ງງານຕາມຄວາມເໝາະສົມ ພ້ອມທັງປະເມີນຜົນການປະຕິບັດງານຂອງພະນັກງານ-ລັດຖະກອນ ຕາມລະບຽບການ.

6. ເອກະສານທີ່ປະກອບກ່ຽວກັບການກຳນົດຕຳແໜ່ງງານ ທີ່ຈະນຳໄປຜ່ານຢູ່ກະຊວງພາຍໃນ ມີດັ່ງນີ້:

1) ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະວິຊາການຮັບຜິດຊອບກຳນົດຕຳແໜ່ງງານຂອງກົມກອງຕົນ (ຖ້າມີ);
2) ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກການຂັ້ນແຂວງ, ຫ້ອງການນະຄອນ ແລະ ຫ້ອງການຂັ້ນເມືອງ;
3) ຕາຕະລາງສັງລວມຕຳແໜ່ງງານ;
4) ຕາຕະລາງວິເຄາະງານ;
5) ໃບກຳນົດຕຳແໜ່ງງານ;

7. ໃຫ້ບັນດາພະແນກການ, ກົມກອງຂັ້ນແຂວງ, ນະຄອນປາກເຊ ແລະ ຫ້ອງການຂັ້ນເມືອງ ເອົາໃຈໃສ່ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດໂມງເວລາລັດຖະການ ຂອງພະນັກງານ-ລັດຖະກອນ ໃຫ້ຖືກຕ້ອງຕາມລະບຽບການ.

1) ຖ້າພົບເຫັນກໍລະນີບໍ່ປະຕິບັດໂມງເວລາລັດຖະການ ໃຫ້ຮີບຮ້ອນສຶກສາອົບຮົມ ຫຼື ກ່າວເຕືອນ;
2) ກໍລະນີສຶກສາອົບຮົມແລ້ວ ຫຼື ຕັກເຕືອນ-ກ່າວເຕືອນແລ້ວ ຖ້າລັດຖະກອນຜູ້ນັ້ນ ຍັງບໍ່ປັບປຸງຕົນໃຫ້ດີຂຶ້ນພາຍໃນກຳນົດ 6 ເດືອນ ກໍ່ປະຕິບັດວິໄນດ້ວຍການໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນ, ຖ້າເປັນລັດຖະການທີ່ມີຕຳແໜ່ງບໍລິຫານໃດໜຶ່ງ ນອກຈາກໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນແລ້ວ ຕ້ອງພິຈາລະນາປົດຕຳແໜ່ງ;

8. ທຸກອົງການຈັດຕັ້ງພັກ-ລັດ ຂັ້ນແຂວງ ແລະ ເມືອງ ເອົາໃຈໃສ່ຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ສະບັບເລກທີ 294/ລບ, ລົງວັນທີ 14 ກັນຍາ 2017 ແລະ ດຳລັດສະບັບເລກທີ 300/ລບ, ລົງວັນທີ 13 ກັນຍາ 2017ວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ - ລັດຖະກອນ ໃຫ້ເປັນປົກກະຕິ ແລະ ໄດ້ຮັບຜົນດີ.

**ເຈົ້າແຂວງ**

ບົວສອນ ວົງສອງຄອນ